# ລາວຮ່ວມສຳພັນ

໑- ຖິ່ນຖານບ້ານເກີດຂອງເຮົາ　　ມີແຕ່ພູເຂົາເຫຼົ່າປ່າຜາດົງ
ພົງໄພອັນໃຫຍ່ແລະກວ້າງ　　ເໝືອຍໝີໝູ່ກວາງລ່ວງຕາມແຄມເຊ
ເຊົ້າເຢັນເຮົາແລເຫັນໄມ້　　ໝອກມົວກົ້ວໃບແສງໃສສ່ອງມາ
ແຂກເຂົາກາເວົ່າຂັນຮ້ອງ　　ຟັງສຽງນ້ຳນອງໂຕນຕາດຕີນຜາ
ອາບເຫຼັ້ນເຢັນໃຈຫາຍຮ້ອນ　　ຫາຍຊວງອຸທອນພັກຜ່ອນກາຍາ...

໒- ບ້ານເຮົາກໍເປັນເຊັ່ນນີ້　　ທົ່ງກວ້າງຂວາງດີສຸດສິ້ນຊົ່ວຕາ
ມີ້ມ່ວງດວງດອກມາລີ　　ບານຈ້ຳຈູ້ມຈີ້ມີມາກໝັກໝາ
ພ້າບຕານຫວານຜຸຜາງສົ້ມ　　ເກີນແສນອຸດົມທັງເຂົ້າແລະປາ
ບ້ານຫຼາຍປາຍຕາມທົ່ງນາ　　ແຄມວັງນ້ຳໃສແລເຫັນໝູ່ປາ
ບ່າວສາວທັງພວກຊາວບ້ານ　　ຢູ່ທາງທຳງານຊື່ນບານອຸຣາ...

໓- ແດນລາວຍືດຍາວຄາວໄກ　　ມີຊື່ລືໄວ້ລ້ານຊ້າງເດີມມາ
ຢູ່ເໜືອຫຼືວ່າຢູ່ໃຕ້　　ບໍ່ແມ່ນອື່ນໄກລ້ວນແຕ່ໄທລາວ
ພີ່ນ້ອງປົກປ້ອງກັນມາ　　ຢ່າຕີຢ່າວ່າລາວເໜືອລາວໃຕ້
ຄົນໃດໄດ້ດີມີສຸກ　　ຊ່ວຍຊູຜູ້ທຸກກັງວົນສົນໃຈ
ເລືອດເນື້ອເຊື້ອແນວແຖວພັນ　　ເຮົາຕ້ອງຮັກກັນສິ້ນຊີວາ...

໔- ເພື່ອນເອີຍຫີບມາດ້ວຍກັນ　　ມາຮ່ວມສຳພັນທັງແຮງທັງໃຈ
ໄວໄວຮີບມາດ້ວຍກັນ　　ມາຮ່ວມປ້ອງກັນເລືອດເນື້ອເຊື້ອລາວ
ໄວໄວຫີບຮູ້ສຶກໃຈ　　ຊ່ວຍຣະວັງໄພໃຫ້ລາວຍືນຍົງ
ປົງຈິດຊີວິດແລະການ　　ເປັນລູກຜູ້ຊາຍຍອມຕາຍເພື່ອຊາດ
ເລືອດຢາດເພື່ອຊາດພຽງໃດ　　ພະລາຈະໃຫຍ່ໄຊຊາດຈະຍາວ...